

ການຕິດຕາມລະບົບອາຫານໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ເນື້ອໃນສຳຄັນ

- ພຸມມີທັດນະໂຍບາຍລະບົບອາຫານໃນ ສປປ ລາວ ໄດ້ມີການເຊື່ອມສານ ແລະ ມີຄວາມພະຍາຍາມເພີ່ມຂຶ້ນ, ເຊິ່ງເຮັດໃຫ້ອາລະລະບົບອາຫານມີຄວາມຍືນຍົງ ແລະ ຄວາມທົນທານຫຼາຍຂຶ້ນ ຜ່ານການສົ່ງເສີມການປະສານງານ ແລະ ສອດຄ່ອງກັບສະຖາບັນຕ່າງໆ.
- ພາບລວມການຕິດຕາມລະບົບອາຫານເປັນພື້ນຖານທີ່ສຳຄັນສຳລັບການຕັດສິນໃຈ ແລະ ລະບົບທີ່ສ້າງຕັ້ງຂຶ້ນແລ້ວ ເຊັ່ນ NIPN, LRIMS ແລະ LAOSIS ທີ່ສັງລວມຂໍ້ມູນດ້ານໂພຊະນາການ, ກະສິກຳ ແລະ ເສດຖະກິດສັງຄົມ. ເຖິງຢ່າງໃດກໍ່ຕາມ, ຄວາມພະຍາຍາມສ່ວນຫຼາຍເຫຼົ່ານີ້ຍັງຖືກຄຸ້ມຄອງແຍກຕ່າງຫາກໃນທົ່ວຂະແໜງການ ແລະ ກະຊວງຕ່າງໆ, ເຮັດໃຫ້ມີຕົວຊີ້ວັດລະບົບອາຫານທີ່ບໍ່ເຊື່ອມໂຍງກັນ. ຄວາມສາມາດໃນລະດັບສູນກາງ ແລະ ທ້ອງຖິ່ນມີຈຳກັດ, ການຄຸ້ມຄອງຂໍ້ມູນ, ແລະ ຊ່ອງວ່າງຂອງຂໍ້ມູນຈຳກັດການວິເຄາະລະບົບອາຫານແບບປະສານງານ ທີ່ຈຳເປັນສຳລັບການຕັດສິນໃຈໃນທົ່ວຂະແໜງການຢ່າງມີປະສິດທິພາບ.
- ຍົກເວັ້ນຂໍ້ມູນດ້ານສຸຂະພາບ ແລະ ກະສິກຳ, ການເກັບກຳສັງລວມຢ່າງເປັນລະບົບ ສຳລັບລະບົບອື່ນໆ ເຊັ່ນ ການປົກຄອງ, ຮູບແບບການບໍລິໂພກອາຫານ ແລະ ການປົກປ້ອງສັງຄົມ ຍັງຢູ່ໃນຊ່ວງເລີ່ມຕົ້ນ. ລະບົບທີ່ມີຢູ່ແລ້ວແມ່ນອີງໃສ່ການສຳຫຼວດ ແລະ ລະບົບຂໍ້ມູນທີ່ໄດ້ຮັບການສະໜັບສະໜຸນຈາກພາຍນອກ.
- ການສ້າງຄວາມເຂັ້ມແຂງ ການຕິດຕາມລະບົບອາຫານ ແມ່ນເປັນໂອກາດທາງຍຸດທະສາດ ແລະ ບູລິມະສິດແຫ່ງຊາດ, ສິ່ງຈຳເປັນຕ້ອງປະຕິບັດພັນທະສັນຍາ ແລະ ຮັບປະກັນການລົງທຶນ ແລະ ການດຳເນີນງານທີ່ຖືກຕາມເປົ້າໝາຍທີ່ວາງໄວ້, ລວມທັງແຜນດຳເນີນງານແຫ່ງຊາດ ສຳລັບການຫັນປ່ຽນໄປສູ່ ການຫັນປ່ຽນລະບົບສະບຽງອາຫານ (2025–2030) ທີ່ຫາກໍ່ເປີດຕົວເມື່ອບໍ່ດົນມານີ້.
- ການສັງລວມເຂົ້າກັບກອງປະຊຸມທີ່ມີຢູ່ແລ້ວ, ການສ້າງຄວາມສາມາດ, ການບູລະນາການການຕິດຕາມເຂົ້າໃນວົງຈອນການວາງແຜນ ແລະ ງົບປະມານ ຈະຮັບປະກັນຄວາມພະຍາຍາມຂອງ ສປປ ລາວ ໃນການຫັນປ່ຽນລະບົບອາຫານ ເພື່ອນຳໄປສູ່ຜົນໄດ້ຮັບທີ່ສາມາດວັດແທກໄດ້.

Photo: © Jon Chica Parada/iStock

ພາກສະເໜີ


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກຳລັງກ້າວໄປສູ່ລະບົບອາຫານແບບປະສານງານ, ຍືນຍົງ ແລະ ສ້າງຄວາມທົນທານ ໂດຍມີຈຸດປະສົງເພື່ອຫັນປ່ຽນປະເທດອອກຈາກການຜະລິດແບບກຸ້ມຕົນເອງ. ເປົ້າໝາຍສຳຄັນລວມມີ ການປັບປຸງຊີວິດການເປັນຢູ່, ການເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ ແລະ ການຫຼຸດຜ່ອນຄວາມແຕກຕ່າງລະຫວ່າງ ປະຊາຄອນໃນເຂດຊົນນະບົດ ແລະ ປະຊາຄອນທີ່ມີຄວາມບອບບາງ. ວາລະນີ້ສະໜັບສະໜຸນຄວາມພະຍາຍາມຂອງລັດຖະບານ ໃນການບັນລຸເປັນປະເທດສະຖານະພາບລາຍຮັບສູງ-ປານກາງ ພາຍໃນປີ 2035 ແລະ ເປັນປະເທດສະຖານະພາບລາຍຮັບສູງພາຍ ໃນປີ 2055, ດ້ວຍການເຕີບໂຕທາງດ້ານເສດຖະກິດທີ່ກວມລວມ ແລະ ເປັນມິດກັບສິ່ງແວດລ້ອມ ທີ່ເປັນລັກສະນະໂດດເດັ່ນຂອງທິດທາງດັ່ງກ່າວນີ້ [1].

ກະສິກຳຍັງເປັນຫົວໃຈອັນສຳຄັນໃນການດຳລົງຊີວິດການເປັນຢູ່ໃນ ສປປ ລາວ, ໂດຍມີການຈ້າງງານປະມານ %70 ຂອງປະຊາກອນແຕ່ລະປະກອບສ່ວນໃຫ້ກັບ GDP ໜ້ອຍກວ່າ [2] %20. ລະບົບອາຫານກຳລັງປະເຊີນ ກັບແຮງກົດດັນທາງດ້ານໂຄງສ້າງຫຼາຍຂຶ້ນ, ລວມທັງການເຊື່ອມໂຊມຂອງສິ່ງແວດລ້ອມ ທີ່ກ່ຽວຂ້ອງກັບການຂະຫຍາຍ ຕົວຂອງພືດເສດຖະກິດ, ຄວາມບອບບາງຕໍ່ກັບດິນຟ້າອາກາດ ແລະ ຂໍ້ຈຳກັດດ້ານພື້ນຖານໂຄງລ່າງ [3,4]. ຄວາມສ່ຽງດ້ານໂພຊະນາການທີ່ເພີ່ມຂຶ້ນ ແລະ ການຂາດສານອາຫານ ຢ່າງຕໍ່ເນື່ອງໃນທຸກຮູບແບບ ແມ່ນຮຸນແຮງຂຶ້ນເນື່ອງຈາກຂໍ້ຈຳກັດໃນການເຂົ້າເຖິງອາຫານ, ໂດຍປະຊາກອນ %80 ບໍ່ສາມາດຊື້ອາຫານທີ່ມີປະໂຫຍດຕໍ່ສຸຂະພາບໄດ້[5]. ສິ່ງທ້າທາຍເຫຼົ່ານີ້ ສົ່ງຜົນກະທົບຕໍ່ຊຸມຊົນໃນເຂດຊົນນະບົດ, ຊຸມຊົນທີ່ຢູ່ຫ່າງໄກສອກຫຼີກ ແລະ ຊຸມຊົນທີ່ມີຄວາມບອບບາງ, ບ່ອນທີ່ຄວາມທຸກຍາກ ແລະ ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານຍັງມີຢູ່ [6].

ພູມມີທັດນະໂຍບາຍອາຫານຂອງ ສປປ ລາວ ສະແດງໃຫ້ເຫັນການຄຸ້ມຄອງຢ່າງກວ້າງຂວາງໂດຍຫັນປ່ຽນໄປສູ່ວິທີການແບບປະສົມປະສານ ແລະ ອີງໃສ່ລະບົບຕ່າງໆ. ພູມມີທັດນະໂຍບາຍດັ່ງກ່າວ ແມ່ນອີງຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (ແຜນ 10 NSEDP 2026–2030), ກັບແຜນດຳເນີນງານແຫ່ງຊາດການຫັນປ່ຽນລະບົບອາຫານໃນ ສປປ ລາວ (NAP-FST) (2025–2030) ແລະ ແຜນປະຕິບັດງານເພື່ອຄວາມສອດຄ່ອງລະບົບອາຫານ (2025–2035) ທີ່ສະໜອງກອບວຽກຂອງລະບົບອາຫານແບບປະສານງານ ແລະ ຍຸດທະສາດການພັດທະນາກະສິກຳຮອດປີ 2025 ແລະ ວິໄສທັດຮອດປີ 2030 ແລະ ກອບວຽກກະສິກຳແບບຍືນຍົງ ແລະ ສີຂຽວ ຮອດປີ 2030 (GSAF) ສະໜັບສະໜຸນທິດທາງຂອງຂະແໜງການ ໃນການຜະລິດ ແລະ ຄວາມຍືນຍົງ.

ນະໂຍບາຍດັ່ງກ່າວສຸມໃສ່ກ່ຽວກັບອາຫານການກິນ ແລະ ໂພຊະນາການຜ່ານລະບຽບການຄຸ້ມຄອງສະພາບແວດລ້ອມ ແລະ ການແຊກແຊງວົງຈອນຊີວິດ, ໃນຂະນະທີ່ການຜະລິດ ແລະ ກອບວຽກດ້ານຊັບພະຍາກອນທຳມະຊາດ ເພື່ອສົ່ງເສີມກະສິກຳແບບຍືນຍົງ, ການປະຕິບັດກະສິກຳທີ່ຊານສະຫຼາດທີ່ທົນທານຕໍ່ສະພາບດິນຟ້າອາກາດ ແລະ ການອະນຸລັກຊີວະນາໆພັນ. ຊີວິດການເປັນຢູ່ ແລະ ຄວາມເທົ່າທຽມກັນແມ່ນໄດ້ປະສົມປະສານໃນຍຸດທະສາດການພັດທະນາແຫ່ງຊາດ ແລະ ການປົກປ້ອງສັງຄົມ, ໂດຍໃຫ້ຄວາມສຳຄັນກ່ຽວກັບບົດບາດຍິງຊາຍ, ປະຊາກອນໃນເຂດຊົນນະບົດ ແລະ ກຸ່ມປະຊາກອນທີ່ມີຄວາມບອບບາງ. ການປະສານງານໃນທົ່ວຂະແໜງການ ສຳລັບການຄຸ້ມຄອງ ລະບົບອາຫານແມ່ນອີງໃສ່ການປະສານງານລະຫວ່າງ ຂະແໜງການ ແລະ ລະຫວ່າງກະຊວງທີ່ກ່ຽວຂ້ອງ ແລະ ເສີມສ້າງ ຄວາມເຂັ້ມແຂງຜ່ານການວາງແຜນຮ່ວມກັນ, ການຈັດຕັ້ງປະຕິບັດທີ່ປະສານສົມທົບ ແລະ ກົນໄກການເງິນທີ່ສອດຄ່ອງກັນ ຂໍ້ມູນ ແລະ ວິທີຕິດຕາມທີ່ມີ

ຫົວຂໍ້ ແລະ ກຸ່ມຕົວຊີ້ວັດ. ຮູບຊົງພາຍນອກໝາຍເຖິງຫົວຂໍ້ທີ່ຕັດທາງຂວາງ. ວົງມົນພາຍໃນໝາຍເຖິງຜົນໄດ້ຮັບໄລຍະຍາວ.



1 ລັດຖະບານ ສປປ ລາວ, 2026. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 10 (2026-2030)

2 OECD, 2024. ການທົບທວນໃນຫຼາຍມິຕິຂອງ ສປປ ລາວ: ການພັດທະນາການເງິນແບບຍືນຍົງ. ການຕີພິມ OECD, Paris.

3 FAO, 2022. ສຸພາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ລາຄາທີ່ເພີ່ມຂຶ້ນ ແລະ ການຫຼຸດລົງຂອງປັດໃຈການຜະລິດ ເຮັດໃຫ້ໂອກາດການຜະລິດກະສິກຳໃນປີ 2022 ຫຼຸດລົງ ແລະ ເພີ່ມຄວາມສ່ຽງຕໍ່ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານເພີ່ມຂຶ້ນ. ປັບປຸງ GIEWS. ອົງການອາຫານ ແລະ ການກະເສດ (FAO)

4 FAO, WFP, 2025. ບົດລາຍງານພິເສດ: 2024 FAO/WFP ການປະເມີນຄວາມໝັ້ນຄົງດ້ານພືດ ແລະ ອາຫານ (CFSAM) ໃຫ້ກັບ ສປປ ລາວ. ເມສາ 2025. ອົງການອາຫານ ແລະ ການກະເສດ (FAO). https://doi.org/10.4060/cd4991en

5 ໂຄງການຄຸນນະພາບອາຫານໂລກ, UNICEF, 2022. ການຕິດຕາມຄຸນນະພາບອາຫານໃນ ສປປ ລາວ. UNICEF, ນະຄອນຫຼວງວຽງຈັນ, ສປປ ລາວ.

6 WFP, 2013. ແຜນວາດຄວາມໝັ້ນຄົງດ້ານອາຫານ ແລະ ໂພຊະນາການຂອງ ສປປ ລາວ. ອົງການອາຫານໂລກ (WFP); ກະຊວງການຕ່ອມມື ແລະ ພັດທະນາເສດຖະກິດຂອງລັດຖະບານ ເຢຍລະມັນ

ຢູ່ແລ້ວ ເປັນພື້ນຖານສຳລັບການວາງແຜນໂດຍອີງໃສ່ຫຼັກຖານ, ໃນຂະນະທີ່ການປະສານງານ ດ້ານການເງິນຂອງຄູ່ຮ່ວມພັດທະນາສະໜັບສະໜຸນ ການຈັດຕັ້ງບູລິມະສິດແຫ່ງຊາດ.

ນະໂຍບາຍລະບົບອາຫານຂອງ ສປປ ລາວ ຍັງສະແດງໃຫ້ເຫັນຄວາມສອດຄ່ອງທີ່ເຂັ້ມແຂງກັບກອບສາກົນ ແລະ ພາກພື້ນ, ໂດຍສະເພາະວາລະການພັດທະນາແບບຍືນຍົງ 2030, ກົນໄກການຄ້ຳປະກັນສະບຽງອາຫານ ຂອງອາຊຽນ ແລະ ມາດຕະຖານລະດັບສາກົນກ່ຽວກັບໂພຊະນາການ, ຄວາມປອດໄພອາຫານ ແລະ ກະສິກຳແບບຍືນຍົງ. ຄວາມສອດຄ່ອງດັ່ງກ່າວນີ້ໄດ້ຮັບການສົ່ງເສີມຜ່ານການປະສານງານກັບການປ່ຽນແປງດິນຟ້າອາກາດ, ຊີວະນາໆພັນ ແລະ ຄວາມສ່ຽງໄພພິບັດ ລວມທັງສັນຍາປາຣີ (Paris Agreement), ກອບສິນທິສັນຍາເຊັນໄດ (Sendai Framework) ສຳລັບການຫຼຸດ ຜ່ອນຄວາມສ່ຽງໄພພິບັດ ແລະ ສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍຊີວະນາໆພັນ ທີ່ກຳນົດນະໂຍບາຍແຫ່ງຊາດໃນວາລະການຫັນປ່ຽນລະບົບອາຫານທີ່ສອດຄ່ອງ ແລະ ມີຄວາມທົນທານ.

ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ 3.0[7] ແລະ ການປະຕິຮູບໃນການແບ່ງຂັ້ນຄຸ້ມຄອງໃນລະດັບຕາແສງ ເປັນຈຸດເລີ່ມຕົ້ນທີ່ສຳຄັນໃນການສ້າງຄວາມເຂັ້ມແຂງໃນການປະສານງານ, ຕິດຕາມ ແລະ ຄວາມຮັບຜິດຊອບຂອງລະບົບອາຫານ ແລະ ການຫັນປ່ຽນລະບົບອາຫານໃນລະດັບທ້ອງຖິ່ນ. ການເປີດຕົວກອບການສະໜອງທຶນສຳລັບທຸລະກິດກະສິກຳຂອງພາກເອກະຊົນຄຽງຄູ່ກັບ NAP-FST (2025–2030)[8] ໃຫ້ທິດທາງສຳລັບການລະດົມທຶນຈາກພາກເອກະຊົນ ເຂົ້າໃນການຫັນປ່ຽນລະບົບອາຫານ.

ບົດສັງລວມນະໂຍບາຍສະບັບນີ້ ກວດສອບສະພາບປະຈຸບັນຂອງການຕິດຕາມລະບົບອາຫານໃນ ສປປ ລາວ ແລະ ໃຫ້ຄຳແນະນຳສຳລັບການສ້າງລະບົບຕິດຕາມແບບປະສົມປະສານທີ່ສາມາດຊຸກຍູ້ການຫັນປ່ຽນທີ່ຍືນຍົງ.

ໂຄງການນັບຖອຍຫຼັງການຫັນປ່ຽນລະບົບອາຫານ

ໂຄງການນັບຖອຍຫຼັງການຫັນປ່ຽນລະບົບອາຫານ ເກີດຈາກກອງປະຊຸມສຸດຍອດລະບົບອາຫານຂອງອົງການສະຫະປະຊາຊາດ ເປັນການຮ່ວມມືລະຫວ່າງສາຂາວິຊາສາກົນ ເຊິ່ງປະຈຸບັນປະກອບມີຜູ້ຊ່ຽວຊານດ້ານລະບົບອາຫານຫຼາຍກວ່າ 65 ທ່ານ ຈາກຫຼາຍສະຖາບັນທົ່ວໂລກ. ການນັບຖອຍຫຼັງໄດ້ພັດທະນາກອບການຕິດຕາມກວດ ກາທົ່ວໂລກເຊິ່ງປະກອບມີ 5 ຂົງເຂດດັ່ງນີ້: (1) ອາຫານການກິນ, ໂພຊະນາການ ແລະ ສຸຂະ ພາບ; (2) ສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ ແລະ ການຜະລິດ; (3) ຊີວິດການເປັນຢູ່, ຄວາມທຸກຍາກ ແລະ ຄວາມເທົ່າທຽມກັນ; (4) ການປົກຄອງ; ແລະ (5) ຄວາມທົນທານ ແລະ ໄດ້ດຳເນີນຂະບວນການປຶກສາຫາລື ເພື່ອຄັດເລືອກ 50 ຊຸດຕົວຊີ້ວັດໃນຫົວຂໍ້ເຫຼົ່ານີ້, ເຊິ່ງປະກອບເປັນຕົວຊີ້ວັດສາກົນ. ການຕີພິມການນັບຖອຍ ຫຼັງເຜີຍແຜ່ການອັບເດດການຕິດຈາກກວດກາປະຈຳປີ ແລະ ການວິເຄາະເພີ່ມເຕີມ ເພື່ອຕິດຕາມ ການຫັນປ່ຽນລະບົບອາຫານທົ່ວໂລກ. ກອບຕົວຊີ້ວັດສາກົນຂອງການນັບຖອຍຫຼັງກຳລັງຖືກດັດປັບໃນລະດັບປະເທດ ເພື່ອຕອບສະໜອງຕາມຄວາມຕ້ອງການ ແລະ ບູລິມະສິດຂອງທ້ອງຖິ່ນ[9].

ໃນ ສປປ ລາວ, ກອບການນັບຖອຍຫຼັງໄດ້ຮັບການດັດປັບ ແລະ ຢັ້ງຢືນ ຄວາມຖືກຕ້ອງ ເພື່ອໃຫ້ສອດຄ່ອງກັບບູລິມະສິດແຫ່ງຊາດ ແລະ ສົ່ງເສີມ ການຕິດຕາມລະບົບອາຫານທັ້ງໃນລະດັບສູນກາງ ແລະ ທ້ອງຖິ່ນ. ຂະບວນການນີ້ໄດ້ຮັບການຈັດຕັ້ງປະຕິບັດຜ່ານການຮ່ວມມື ຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງທີ່ລວມມີຄະນະທີ່ປຶກສາ, ກອງປະຊຸມການປັບຕົວ ໃນເດືອນ ກຸມພາ 2026 ແລະ ກອງປະຊຸມຢັ້ງຢືນຄວາມຖືກຕ້ອງໃນເດືອນ ມິຖຸນາ 2026. ກອງປະຊຸມດັ່ງກ່າວນຳພາໂດຍ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ອົງການອາຫານ ແລະ ການກະເສດ (FAO), ພັນທະມິດດ້ານຊີວະນາໆພັນສາກົນ ແລະ ອົງການ ແລະ CIAT, ອົງການ Global Alliance for Improved Nutrition (GAIN) ແລະ ອົງການ Deutsche Gesellschaft für Internationale Zusammenarbeit (GIZ) GmbH.

ຕົວຊີ້ວັດທີ່ເປັນບູລິມະສິດ

ສຳລັບຂົງເຂດ **ອາຫານການກິນ, ໂພຊະນາການ ແລະ ສຸຂະພາບ**, ຜູ້ມີສ່ວນຮ່ວມໄດ້ແນະນຳຕົວຊີ້ວັດຕ່າງໆ ລວມທັງຄວາມຫຼາກຫຼາຍຂອງອາຫານການກິນສຳລັບແມ່ຍິງ ແລະ ເດັກນ້ອຍ, ການແຜ່ຫຼາຍຂອງຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ແລະ ຄວາມສາມາດຊື້ອາຫານໃນຄົວເຮືອນ. ການເຂົ້າເຖິງນ້ຳທີ່ປອດໄພ ແລະ ການບໍລິໂພກໝາກໄມ້, ຜັກ ແລະ ເຄື່ອງດື່ມນ້ຳອັດລົມທີ່ມີນ້ຳຕານ ແມ່ນໄດ້ລວມເຂົ້າໃນການພິຈາລະນາດ້ວຍ. ຜູ້ມີສ່ວນຮ່ວມຍັງສັງເກດເຫັນຄວາມສຳຄັນຂອງຕົວຊີ້ວັດທີ່ກ່ຽວຂ້ອງກັບ ພຶດຕິກຳການບໍລິໂພກອາຫານທີ່ເພີ່ມຄວາມສ່ຽງ ແລະ ຊ່ວຍປ້ອງກັນພະຍາດທີ່ບໍ່ຕິດຕໍ່.

ພາຍໃຕ້ຂົງເຂດ **ສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ ແລະ** ການຜະລິດ, ຕົວຊີ້ວັດທີ່ແນະນຳປະກອບມີ: ປະລິມານການຜະລິດ ແລະ ຜົນຜະລິດຂອງສິນຄ້າທີ່ສຳຄັນ (ພືດ, ສັດລ້ຽງ ແລະ ການປະມົງ) ແລະ ການນຳໃຊ້ທີ່ດິນ ທີ່ສະທ້ອນໃຫ້ເຫັນການປ່ຽນແປງພື້ນທີ່ປູກຝັງ, ປ່າປົກຫຸ້ມ ແລະ ດິນເຊື່ອມໂຊມ. ນອກຈາກນີ້, ຜູ້ມີສ່ວນຮ່ວມຍັງໄດ້ເນັ້ນໜັກເຖິງຄວາມຕ້ອງການຕົວຊີ້ວັດທີ່ກ່ຽວຂ້ອງກັບການໃຊ້ຢາປາບສັດຕູພືດ ແລະ ປຸ໋ຍ ແລະ ນ້ຳໃຊ້ສຳລັບຊົນລະປະທານ. ການຕິດຕາມການປ່ອຍທາດອາຍເຮືອນແກ້ວຈາກລະບົບກະສິກຳ-ອາຫານ ມີຄວາມສຳຄັນຫຼາຍຕໍ່ການຕິດຕາມຜົນກະທົບຕໍ່ສິ່ງ ແວດລ້ອມຂອງລະບົບອາຫານ ແລະ ຄວາມພະຍາຍາມໃນການຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ.

ໃນຂົງເຂດ **ຊີວິດການເປັນຢູ່, ຄວາມທຸກຍາກ ແລະ ຄວາມເທົ່າທຽມກັນ, ຕົວຊີ້ວັດບູລິມະສິດ**, ປະກອບມີ: ການຈ້າງງານຂະແໜງກະສິກຳ ແລະ ຜົນຜະລິດແຮງງານ ແລະ ການເພິ່ງພາລະບົບກະສະກຳ-ອາຫານຂອງຄົວເຮືອນ. ນອກຈາກນີ້, ຍັງລວມເຖິງການເຂົ້າເຖິງສິນເຊື່ອກະສິກຳ ແລະ ອັດຕາເງິນເຟີ້ຂອງລາຄາອາຫານ. ກ່ຽວຂ້ອງກັບສິດທິ, ຜູ້ມີສ່ວນຮ່ວມໄດ້ເນັ້ນໜັກກ່ຽວກັບການເປັນສະມາຊິກຂອງຊາວກະສິກອນຂະໜາດນ້ອຍໃນສະຫະກອນກະສິກຳ ແລະ ການເປັນເຈົ້າຂອງທີ່ດິນຂອງແມ່ຍິງ ແລະ ການເຂົ້າຮ່ວມໃນການຝຶກອົບຮົມເຕັກນິກ.

ສຳລັບ **ຂົງເຂດການປົກຄອງ**, ຕົວຊີ້ວັດກວມເອົາຊັດສ່ວນເປົ້າໝາຍ ຂອງ NAP-FST (2025–2030) ທີ່ປະສົມປະສານເຂົ້າໃນງົບປະມານຂອງແຂວງ ແລະ ແຜນວຽກຂອງຂະແໜງການ ແລະ ການຈັດສັນງົບປະມານສຳລັບໂພຊະນາການ. ຜູ້ມີສ່ວນຮ່ວມໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການປະສານງານກັບຫຼາຍພາກສ່ວນ, ໂດຍໜ້າທີ່ຂອງຄະນະກຳມະການໂພຊະນາການແຫ່ງຊາດ ແລະ ຄະນະກຳມະການໂພຊະນາການຂັ້ນແຂວງ ໄດ້ກຳນົດເປັນມາດຕະການປະຕິບັດຕົວຈິງ ຂອງຄວາມສາມາດໃນການປະສານງານລະດັບສູນກາງ ແລະ ທ້ອງຖິ່ນ.

ໃນຂົງເຂດ **ຄວາມທົນທາ**ນ, ຕົວຊີ້ວັດທີ່ແນະນຳລວມມີໜ້າທີ່ຂອງການຕະຫຼາດ ລະ ດັບແຂວງ ແລະ ຄວາມຜັນຜວນຂອງລາຄາອາຫານ. ກ່ຽວຂ້ອງກັບຄວາມຫຼາກຫຼາຍຊີວະນາໆພັນກະສິກຳ ແລະ ຄວາມຫຼາກຫຼາຍຂອງອາຫານ, ຕົວຊີ້ທີ່ສຳຄັນປະກອບມີ ແຫຼ່ງອາຫານປ່າໃນທ້ອງຖິ່ນທີ່ມີ ປະສິດທິພາບ ແລະ ການເຂົ້າເຖິງແຫຼ່ງອາຫານຕາມທຳມະຊາດຂອງຄົວເຮືອນ (ປ່າ, ແມ່ນ້ຳ, ດິນທາມ). ການກະກຽມຄວາມພ້ອມຮັບມືກັບໄພພິບັດແມ່ນ ຂົງເຂດທີ່ສຳຄັນ ແລະ ຜູ້ມີສ່ວນຮ່ວມໄດ້ແນະນຳໃຫ້ມີການຕິດຕາມລະບົບເຕືອນໄພລ່ວງໜ້າ ແລະ ອັດຕາສ່ວນຂອງແຜນການຄຸ້ມຄອງໄພພິບັດລະດັບແຂວງທີ່ໄດ້ຮັບການປັບປຸ່ງ ແລະ ຈັດຕັ້ງປະຕິບັດ.

7 UN-ESCAP, 2025. ກອບສຳລັບການດຳເນີນງານ: ການພັດທະນາ ແຜນ NDC 3.0 ຂອງ ສປປ ລາວ. ຄະນະກຳມະການເສດຖະກິດ ແລະ ສັງຄົມປະຈຳອາຊີ ແລະ ປາຊີຟິກ ພະແນກສິ່ງແວດລ້ອມ ແລະ ການພັດທະນາ ສະຫະປະຊາຊາດ (ESCAP)

8 ລັດຖະບານຂອງ ສປປ ລາວ, FAO, 2026. ແຜນດຳເນີນງານແຫ່ງຊາດກ່ຽວກັບການກະກຽມ ແລະ ການຫັນປ່ຽນໄປສູ່ການຫັນປ່ຽນລະບົບອາຫານໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ຈາກແຜນການ (2021) ໄປສູ່ ການດຳເນີນງານ (2025–2030).

9 ໂຄງການນັບຖອຍຫຼັງການຫັນປ່ຽນລະບົບອາຫານ 2024. ບົດລາຍງານການນັບຖອຍຫຼັງລະບົບອາຫານ 2024: ການຕິດຕາມຄວາມຄືບໜ້າ ແລະ ການຄຸ້ມຄອງການຈັດຕັ້ງປະຕິບັດ. ມະຫາວິທະຍາໄລ Columbia, ມະຫາວິທະຍາໄລ Cornell, ອົງການອາຫານ ແລະ ການກະເສດ ຂອງອົງການສະຫະປະຊາຊາດ, ອົງການ Global Alliance for Improved Nutrition.

ຂໍ້ມູນທີ່ມີ ແລະ ຊ່ອງວ່າງ

ພາບລວມການຕິດຕາມລະບົບອາຫານຂອງ ສປປ ລາວ ປະກອບດ້ວຍ ລະບົບແຫ່ງຊາດ, ກອງປະຊຸມຮ່ວມກັນ ແລະ ການລິເລີ່ມໃນພາກພື້ນ ທີ່ກວມເອົາຂໍ້ມູນດ້ານໂພຊະນາການ, ກະສິກຳ, ດິນຟ້າອາກາດ ແລະ ຂໍ້ມູນເສດຖະກິດ-ສັງຄົມ. ຄວາມສາມາດໃນການຕິດຕາມທີ່ເຂັ້ມແຂງ ມີໃນຂະແໜງສາທາລະນະສຸກ ແລະ ໂພຊະນາການ, ໂດຍໄດ້ຮັບການ ສະໜັບສະໜູນຈາກການເຝົ້າລະວັງ ແລະ ລະບົບການລາຍງານທີ່ສ້າງຕັ້ງ ຂຶ້ນແລ້ວ. ຂົງ ເຂດອື່ນໆ, ໂດຍສະເພາະຂົງເຂດສິ່ງແວດລ້ອມ, ຊີວິດການ ເປັນຢູ່ ແລະ ການປົກຄອງ, ຍັງບໍ່ລວມສູນເປັນກະແຈກກະຈາຍ ແລະ ອີງ ໃສ່ການສຳຫຼວດແຕ່ລະໄລຍະ (ອີງຕາມໂຄງການ) ຫຼືລະບົບຂໍ້ມູນທີ່ໄດ້ຮັບ ການສະໜັບສະໜູນຈາກພາຍນອກ (ເຊັ່ນ: ອົງການ WFP, FAO, ໂຄງການ DHS, USAID ແລະອື່ນໆ)

ເຖິງແມ່ນວ່າຈະມີໂຄງສ້າງນະໂຍບາຍທີ່ຂ້ອນຂ້າງຄົບຖ້ວນ, ການຈັດຕັ້ງ ປະຕິບັດຍັງແຍກໄປຕາມຂະແໜງການຕ່າງໆ, ເຊິ່ງຈຳກັດປະສິດທິພາບໃນ ການສະໜັບສະໜູນການຕິດຕາມ ແລະ ການຕັດສິນໃຈຂອງລະບົບອາຫານ ແບບປະສົມປະສານ. ລະບົບຂໍ້ມູນສ່ວນຫຼາຍແມ່ນເປັນແບບສະເພາະຂອງ ຂະແໜງການ ແລະ ບໍ່ສາມາດເຮັດວຽກຮ່ວມກັນໄດ້, ການຈຳກັດການ ວິເຄາະໃນທົ່ວຂະແໜງການ ແລະ ເຮັດໃຫ້ຄວາມສາມາດໃນການຕິດຕາມ ຜົນໄດ້ຮັບຂອງລະບົບອາຫານໂດຍລວມຫຼຸດລົງ. ຖານຂໍ້ມູນຂ່າວສານທີ່ສຳ ຄັນປະກອບມີ ຖານຂໍ້ມູນແຫ່ງຊາດເພື່ອໂພຊະນາການ (NIPN), ລະບົບ ການຄຸ້ມຄອງຂໍ້ມູນຂ່າວສານຊັບພະຍາກອນທີ່ດິນ (LRIMS), ການບໍລິການ ຂໍ້ມູນສະຖິຕິຂອງລາວ (LAOSIS), ລະບົບຂໍ້ມູນຂ່າວສານກະສິກຳ-ຊີວະ ນາໆພັນຂອງ ສປປ ລາວ ແລະ ຖານຂໍ້ມູນຄວາມສ່ຽງ ແລະ ຄວາມທົນທານ ຂອງ ESCAP ອາຊີ-ປາຊີຟິກ[10]. ການເສີມສ້າງການເຊື່ອມໂຍງກັບຖານ ຂໍ້ມູນເຫຼົ່ານີ້ ແລະ ຖານຂໍ້ມູນອື່ນໆ ຈະຊ່ວຍປັບປຸງການວິເຄາະແບບປະສົມ ປະສານ, ສະໜັບສະໜູນການຕັດສິນໃຈຢ່າງເປັນລະບົບ ແລະ ສົ່ງເສີມ ການຕິດຕາມຜົນໄດ້ຮັບການຫັນປ່ຽນລະບົບອາຫານ.

ນອກນັ້ນ, ຍັງມີສິ່ງທ້າທ້າຍຕ່າງໆ ທີ່ກ່ຽວຂ້ອງກັບຄວາມສາມາດ, ການຄຸ້ມຄອງ ແລະ ການນຳໃຊ້. ຄວາມສາມາດດ້ານວິຊາການ ແລະ ພື້ນຖານ ໂຄງລ່າງທີ່ຈຳກັດເຮັດໃຫ້ຈຳກັດການວິເຄາະ ແລະ ການນຳໃຊ້ຂໍ້ມູນທີ່ ສອດຄ່ອງກັນ. ໃນຂະນະທີ່ຂໍ້ມູນຂອງບາງຂະແໜງການສ່ວນຫຼາຍ ແມ່ນ ໂພຊະນາການ ແລະ ການຜະລິດກະສິກຳ ແມ່ນມີການເກັບກຳເປັນປະຈຳ ຜ່ານກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະ ສິ່ງແວດ ລ້ອມ ແລະ ກະຊວງການເງິນ, ແຕ່ມີຕົວຊີ້ວັດຫຼັກທີ່ກຳນົດໄວ້ ທີ່ບໍ່ໄດ້ຖືກວິເຄາະເປັນ ປະຈຳ ຫຼືລວມເຂົ້າໃນລະບົບຕິດຕາມປະຈຸບັນ ຕົວຢ່າງ: ການປ່ຽງແປງພື້ນທີ່ ປູກຝັ່ງ, ການໃຊ້ຢາປາບສັດຕູພືດໃນພື້ນທີ່ປູກຝັ່ງ, ການເຂົ້າເຖິງສິນເຊື່ອ ກະສິກຳແລະ ການປ່ຽນແປງລາຄາອາຫານ. ນອກຈາກນີ້, ຕົວຊີ້ວັດບູລິມະ ສິດບາງອັນສຳລັບການຫັນປ່ຽນລະບົບອາຫານ ຍັງບໍ່ໄດ້ມີການບັນທຶກໄວ້ ຢ່າງເປັນລະບົບພາຍໃນກອບວຽກທີ່ມີຢູ່ແລ້ວ ເຊັ່ນ: ການບໍລິໂພກໝາກ ໄມ້ ແລະ ຜັກ ແລະ ເຄື່ອງດື່ມນ້ຳອັດລົມທີ່ມີນ້ຳຕານ, ພຶດຕິກຳການບໍລິໂພກ ອາຫານທີ່ເພີ່ມຄວາມສ່ຽງ ແລະ ປ້ອງກັນໂລກທີ່ບໍ່ຕິດຕໍ່, ການປ່ອຍທາດ ອາຍເຮືອນແກ້ວຈາກລະບົບກະສິກຳ-ອາຫານ ແລະ ຄົວເຮືອນທີ່ສາມາດເຂົ້າ ເຖິງແຫຼ່ງອາຫານຕາມທຳມະຊາດ. ນອກນັ້ນ, ຍັງພົບເຫັນຊ່ອງວ່າງໃນການ ຈຳແນກຂໍ້ມູນ, ໂດຍສະເພາະແມ່ນຂໍ້ມູນຍິງຊາຍ, ພູມສັນຖານ ແລະ ກຸ່ມ ທີ່ມີຄວາມບອບບາງ. ພ້ອມດຽວກັນນີ້ ຍັງມີການລາຍງານກ່ຽວກັບຂໍ້ຈຳກັດ ໃນການຄຸ້ມຄອງຂໍ້ມູນ ແລະ ການເປັນຕົວແທນ, ໂດຍສະເພາະໃນລະດັບ ທ້ອງຖິ່ນ.

ໃນຂະນະທີ່ຫຼາຍເວທີທີ່ມີຢູ່ແລ້ວ, ແຕ່ຍັງບໍ່ທັນເຊື່ອມໂຍງກັນຢ່າງເປັນລະບົບ ກັບຂະ ບວນການນະໂຍບາຍ ຫຼືນຳໃຊ້ເປັນປະຈຳເພື່ອແຈ້ງໃຫ້ຊາບກ່ຽວກັບ ການວາງແຜນທີ່ມີການປະສານງານ ແລະ ການຈັດສັນຊັບພະຍາກອນ. ດັ່ງນັ້ນ, ການເສີມສ້າງການເຊື່ອມໂຍງຂໍ້ມູນ, ການກຳນົດມາດຕະຖານ ແລະ ການລາຍງານໃນທົ່ວຂະແໜງການ ແມ່ນມີຄວາມສຳຄັນຫຼາຍຕໍ່ການນຳເອົາ ນະໂຍບາຍລະບົບອາຫານແຫ່ງຊາດທີ່ມີການເຊື່ອມສານຫຼາຍຂຶ້ນ ໄປນຳໃຊ້ ໃນການຈັດຕັ້ງປະຕິບັດຕົວຈິງ.

ຄຳແນະນຳສຳລັບການສົ່ງເສີມການຕິດຕາມ ແລະ ການເຊື່ອມໂຍງ ນະໂຍບາຍ

1. ສ້າງລະບົບຂໍ້ມູນແບບເຊື່ອມສານແຫ່ງຊາດ: ກຳນົດຂໍ້ມູນທີ່ເປັນສູນກາງ ແລະ ສາມາດເຂົ້າເຖິງໄດ້ງ່າຍ ເພື່ອເກັບຮັກສາຂໍ້ມູນລະບົບອາຫານ ເຊິ່ງ ຊ່ວຍໃຫ້ສາ ມາດວິເຄາະຂ້າມຂະແໜງການ ແລະ ສະໜັບສະໜູນ ການວາງແຜນໂດຍອີງໃສ່ຫຼັກຖານ. ເພື່ອເຮັດແນວນັ້ນ, ມີ ຄວາມຕ້ອງການທີ່ຈະສ້າງ ແລະ ເສີມສ້າງກົນໄກການປະສານງານທີ່ມີ ຢູ່ແລ້ວລະຫວ່າງກະຊວງ ເພື່ອເຮັດຂໍ້ຕົກລົງການແລກ ປ່ຽນຂໍ້ມູນຢ່າງເປັນ ທາງການ ແລະ ຂັບເຄື່ອນການສ້າງມາດຕະຖານໃນທົ່ວຂະ ແໜງການ. ແຜນການພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 10 (NSEDP) (2026–2030) ໄດ້ກຳນົດການສ້າງເວທີທີ່ເປັນມາດຕະຖານທັງແບບ ລວມສູນ ແລະ ແບ່ງຂັ້ນຄຸ້ມຄອງ ໃຫ້ກັບທ້ອງຖິ່ນ (ເຊັ່ນ: ສູນຂໍ້ມູນ, data portals, ແລະ dashboards). NAP-FST (2025–2030) ຍັງ ເປັນກອບສຳລັບການດຳເນີນງານສຳລັບການຈັດຕັ້ງລະບົບອາຫານໂດຍ ລວມອີກດ້ວຍ.

2. ປິດຊ່ອງວ່າງຂໍ້ມູນທີ່ສຳຄັນ ແລະ ເສີມສ້າງຄວາມສາມາດ ໃນ ການຕິດຕາມກວດກາ: ສ້າງຄວາມສາມາດໃນລະດັບສູນກາງ ແລະ ທ້ອງ ຖິ່ນສຳລັບການຕິດຕາມກວດກາລະບົບອາຫານແບບເຊື່ອມສານ ຜ່ານ ການຝຶກອົບຮົມທີ່ໄດ້ກຳນົດໄວ້ກ່ຽວກັບການເກັບຂໍ້ມູນ ແລະ ການ ວິເຄາະ ແລະ ການຕີຄວາມ ໝາຍຂອງຕົວຊີ້ວັດລະບົບອາຫານ ທີ່ເປັນບູລິ ມະສິດໃນຫຼາຍຂະແໜງການ. ໃນນີ້ລວມທັງການປັບປຸງການແຍກຂໍ້ມູນ ແລະ ການຄຸ້ມຄອງລະດັບທ້ອງຖິ່ນ ແລະ ການພັດທະນາຄຳແນະນຳ ການປະຕິບັດ ແລະ ວິທີການມາດຕະຖານສຳ ລັບຕົວຊີ້ວັດທີ່ສະເໜີໄວ້. ນອກຈາກນີ້, ການສ້າງຄວາມສາມາດດ້ານວິຊາການ ແລະ ສະຖາບັນ ສຳລັບການວິເຄາະ ແລະ ການນຳໃຊ້ຂໍ້ມູນລະບົບອາຫານໃນແຕ່ລະ ກະຊວງ ແລະ ລະດັບການບໍລິຫານຕ່າງໆ.

3. ການປະສົມປະສານການຕິດຕາມເຂົ້າໃນວົງຈອນການວາງແຜນ ແລະ ງົບປະມານໃນຂັ້ນສູນກາງ ແລະ ທ້ອງຖິ່ນ: ການເຊື່ອມສານຕົວຊີ້ວັດ ລະບົບອາຫານ ທີ່ເປັນບູລິມະສິດທີ່ໄດ້ຮັບຮອງໃນ NAP-FST (2025–2030) ຂອງລາວເຂົ້າໃນຂະບວນການວາງແຜນລະດັບສູນກາງ ແລະ ລະດັບແຂວງຢ່າງເປັນລະບົບ. ສະໜອງການຝຶກອົບຮົມໃນລະດັບ ທ້ອງຖິ່ນໃນການເກັບກຳ, ວິເຄາະ ແລະ ການແປຄວາມໝາຍ. ຮັບປະກັນ ວ່າຂົດໝາຍອັນສຳຄັນທາງນະໂຍບາຍ ແລະ ພັນທະສັນຍາຕ່າງໆໄດ້ຮັບ ການຕິດຕາມ ແລະ ລາຍງານທຽບກັບງົບປະມານຂອງແຂວງ ແລະ ແຜນ ວຽກຂອງຂະແໜງການຕ່າງໆ. ເສີມສ້າງຄວາມຮັບຜິດ ຊອບລະຫວ່າງ ຫຼັກຖານ ແລະ ການລົງທຶນຂອງລັດທັງໃນລະດັບສູນກາງ ແລະ ລະດັບ ທ້ອງຖິ່ນ.

4. ເສີມສ້າງການເຊື່ອມໂຍງລະຫວ່າງຂໍ້ມູນ ແລະ ການຈັດຕັ້ງປະຕິບັດ ນະໂຍບາຍ: ສ້າງກົນໄກການທົບທວນຄືນທີ່ເປັນລະບົບ ແລະ ເປັນປະຈຳ ພາຍໃຕ້ NAP-FST (2025–2030) ເພື່ອປະເມີນ ແລະ ແປຜົນ ການຄົ້ນພົບທີ່ສ້າງຂຶ້ນຜ່ານກອບຕົວຊີ້ວັດລະບົບອາຫານທີ່ສະເໜີ ແລະ ນຳພາການປະສານງານໃນທົ່ວຂະແໜງການຕ່າງໆ. ກົນໄກເຫຼົ່ານີ້ຄວນນຳ ເອົາກະຊວງຂອງລັດ, ຄູ່ຮ່ວມພັດທະນາ, ພາກເອກະຊົນ, ອົງການຈັດຕັ້ງ ທາງສັງຄົມ ແລະ ສະຖາບັນຄົ້ນຄວ້າມາຮ່ວມກັນ ເພື່ອຮັບປະກັນວ່າໂຄງ ສ້າງພູມມິທັດນະໂຍບາຍລະບົບອາຫານ ຂອງ ສປປ ລາວ ທີ່ມີຄວາມ ພະຍາຍາມຫຼາຍຂຶ້ນສອດຄ່ອງກັບລະບົບການຕິດຕາມ, ການຮຽນຮູ້ ແລະ ຄວາມຮັບຜິດຊອບທີ່ເຊື່ອມສານກັນຢ່າງເທົ່າທຽມກັນ.

5. ພັດທະນາພື້ນຖານໂຄງລ່າງຂໍ້ມູນສຳລັບຕົວຊີ້ວັດບູລິມະສິດທີ່ເກີດຂຶ້ນ ໃໝ່: ສຳລັບຕົວຊີ້ວັດທີ່ຍັງບໍ່ທັນໄດ້ຮັບການບັນທຶກໄວ້ຢ່າງເປັນລະບົບ ຫຼື ເປັນປະຈຳ,ລົງທຶນໃນພື້ນຖານດ້ານວິທີການ ແລະ ສະຖາບັນທີ່ຈຳເປັນ ກ່ອນທີ່ຈະເຊື່ອມສານຢ່າງເຕັມຮູບແບບເຂົ້າໃນການຕິດຕາມລະດັບຊາດ.

6. ຮັບປະກັນການສະໜອງທຶນພາຍໃນປະເທດສະເພາະສຳລັບ ການຕິດຕາມ: ກົນໄກການປະສານງານ ແລະ ລະບົບການຕິດຕາມໃນ ປະຈຸບັນ ແມ່ນອາໃສການສະໜອງທຶນ ຈາກຄູ່ຮ່ວມພັດທະນາ ຢ່າງຫຼວງຫຼາຍເຊິ່ງສ້າງຄວາມບອບບາງທາງດ້ານໂຄງສ້າງ. ການຈັດສັນ ງົບປະມານສະເພາະສຳລັບການຕິດຕາມລະບົບອາຫານ ພາຍໃນ ງົບປະມານການຈັດຕັ້ງປະຕິບັດ ແລະ ແຜນວຽກຂອງຂະແໜງການແມ່ນ ເປັນສິ່ງຈຳເປັນເພື່ອຮັບປະກັນການຕິດຕາມມີຄວາມຍືນຍົງ.

10 ເວທີລັດຖະບານຂອງຄະນະກຳມະການເສດຖະກິດ ແລະ ສັງຄົມສຳລັບອາຊີ ແລະ ປາຊີຟິກ (ESCAP).